ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 1689 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 24 ເມສາ 2026

# ໜັງສືແຈ້ງເຊີນປະມູນ

1. ກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດຮຽນເຊີນບັນດາບໍລິສັດ, ຫ້າງຮ້ານ ທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຮ່ວມຍື່ນຊອງປະມູນ ສໍາລັບການສະໜອງອຸປະກອນສື່ການຮຽນ-ການສອນ, ເຄື່ອງຫຼິ້ນເດັກນ້ອຍ ເພື່ອສະໜອງໃຫ້ແກ່ ຫ້ອງກຽມປະຖົມ, ກຸ່ມຮຽນຜ່ານການຫຼິ້ນ, ການກະກຽມຄວາມພ້ອມ 10 ອາທິດໄລຍະພັກແລ້ງ, ອຸປະກອນຮັບໃຊ້ ສໍາລັບການພັດທະນາວິຊາຊີບແບບຕໍ່ເນື່ອງຂອງຄູຊັ້ນປະຖົມສຶກສາ ເຊິ່ງແມ່ນອົງປະກອບ 01 ໃນ 05 ແຂວງ 09 ເມືອງ ແລະ ອົງປະກອບ 02 ໃນ 05 ແຂວງ 12 ເມືອງ ຂອງໂຄງການປັບປຸງພື້ນຖານການຮຽນຮູ້ຂອງເດັກ;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງພາຍໃນ ທີ່ໄດ້ກໍານົດໄວ້ໃນ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງ ປະຕິບັດກົດໝາຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນການປະມູນໄດ້. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ເຂົ້າເບິ່ງເອກະສານປະມູນທີ່ ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ. ຊັ້ນ 3 (ຕຶກ A1) ຫ້ອງ 309 ເບີໂທຕິດຕໍ່: 020 9142 9451, 020 7798 9988 ໃນເວລາ ລັດຖະການ;
4. ເອກະສານປະມູນຄົບຊຸດທີ່ເປັນພາສາລາວ ສາມາດຊື້ໄດ້ ໂດຍຜູ້ທີ່ສົນໃຈປະມູນ ຍື່ນໜັງສືສະເໜີຫາ ຫຼື ສາມາດສອບຖາມລາຍລະອຽດ ເອົາເອກະສານປະມູນ ເລີ່ມແຕ່ວັນທີ 24 ເມສາ 2026 ຫາວັນທີ 26 ພຶດສະພາ 2026 ຢູ່ທີ່ຫ້ອງ 309 (ຕຶກ A1) ກະຊວງສຶກສາທິການ ແລະ ກິລາ ຕາມວັນເວລາລັດຖະການ;
5. ຊອງປະມູນທຸກໆຊອງຈະໄດ້ເປີດໃນວັນທີ 26 ພຶດສະພາ 2026 ເວລາ 09:00 ໂມງ ທີ່ຫ້ອງປະຊຸມຂອງກະຊວງສຶກສາທິການ ແລະ ກິລາ ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດຊອງ.
6. ທຸກຊອງປະມູນຕ້ອງມີການຄໍ້າປະກັນດ້ວຍແຊັກ (ວີຊາ) ຫຼື ໜັງສືຄໍ້າປະກັນອອກໂດຍທະນາຄານຊຶ່ງມີມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີປະມູນ.

ຮອງຫົວໜ້າ/ຫົວໜ້າຫ້ອງການ

ພົມມະສອນ ສີສະອາດ